ທະນາຄານຮ່ວມພັດທະນາ

| Position ID: | EXC_SCS/ITD |
|---|---|

# ລາຍລະອຽດຂອງໜ້າວຽກ ແລະ ເງື່ອນໄຂການສະໝັກ

**ຊື່ຕຳແໜ່ງ:** ພະນັກງານ ວິຊາການ ຄຸ້ມຄອງລະບົບຄວາມປອດໄພດ້ານໄອທີ

**Position Name:** **Senior Cyber Security**

❖ ໜ້າທີ່ຮັບຜິດຊອບຫຼັກ (ToR):

- ວິເຄາະຂໍ້ມູນໄອທີເພື່ອປະເມີນຄວາມສ່ຽງດ້ານຄວາມປອດໄພ;
- ຄົ້ນຄວ້າ Solution ຕ່າງໆ ທີ່ກ່ຽວຂ້ອງກັບ Cyber Security;
- ຕິດຕັ້ງ, Configure ແລະ ຍົກລະດັບຊອບແວຄວາມປອດໄພ, ເຊັ່ນ: Antivirus ແລະ ອື່ນໆ;
- ຄຸ້ມຄອງລະບົບ Infrastructure of Security ຂອງທະນາຄານ;
- ທົດສອບຊ່ອງໂຫວ່ Web Service ແລະ Application ຂອງທະນາຄານ;
- ປົກປ້ອງເຄືອຂ່າຍດ້ວຍ Firewall, ການປ້ອງກັນລະຫັດຜ່ານ ແລະ ລະບົບອື່ນໆ;
- ດຳເນີນການປ້ອງກັນ ແລະ ແກ້ໄຂກ່ຽວກັບການລະເມີດຄວາມເປັນສ່ວນຕົວ ແລະ ໄພຄຸກຄາມ ຈາກ Malware.
- ປະສານງານກັບບັນດາ Vendor Security ຕ່າງໆ;
- ສ້າງນະໂຍບາຍດ້ານຄວາມປອດໄພ (cyber security policy) ກ່ຽວກັບລະບົບຮັກສາຄວາມປອດໄພດ້ານໄອທີ ຂອງທະນາຄານ;
- ສ້າງຄູ່ມືການປະຕິບັດວຽກ ກ່ຽວກັບວຽກງານທີ່ຕົນຮັບຜິດຊອບ;
- ປະຕິບັດວຽກງານອື່ນໆຕາມການມອບໝາຍ ຂອງຄະນະພະແນກໄອທີ ຫຼື ຄະນະອຳນວຍການທະນາຄານຮ່ວມພັດທະນາ.

❖ ວຸດທິການສຶກສາ (Academic Background):

- ຜູ້ທີ່ສະໝັກໃນຕຳແໜ່ງນີ້ຈະຕ້ອງຮຽນຈົບລະດັບ ປະລິນຍາຕີ ຂຶ້ນໄປໃນສາຂາວິຊາ:
  - ວິສະວະກຳໄອທີ, ວິສະວະກຳຄອມພິວເຕີ, ວິທະຍາສາດຄອມພິວເຕີ ຫຼື ສາຂາທີ່ກ່ຽວຂ້ອງ.

❖ ກ່ຽວກັບຜູ້ສະໝັກ (About Applicant):

- ມີປະສົບການ ຢ່າງໜ້ອຍ 2 ປີ ກ່ຽວກັບ ການຄຸ້ມຄອງລະບົບ Firewall ແລະ ຊອບແວຄວາມປອດໄພເຊັ່ນ: Palo alto, fertigate, Forti web, Cisco ASA, SonicWall ແລະ ລະບົບອື່ນໆ;
- ມີຄວາມສາມາດໃນການແກ້ໄຂບັນຫາຄວາມປອດໄພ ແລະ ລະບົບເຄືອຂ່າຍ;
- ສາມາດປະຕິບັດມາດຕະການຄວາມປອດໄພ ເພື່ອຮັບປະກັນ ໂຄງລ່າງພື້ນຖານຂອງອົງກອນ ແລະ ຂໍ້ມູນຈະຖືກຮັກສາໄວ້ຢ່າງປອດໄພ;
- ສາມາດອອກແບບ, ຈັດຕັ້ງປະຕິບັດ, ບຳລຸງຮັກສາ, ກວດກາ ແລະ ຍົກລະດັບທຸກມາດຕະການຄວາມປອດໄພທີ່ຈຳເປັນ ເພື່ອປົກປ້ອງຂໍ້ມູນ, ລະບົບ ແລະ ເຄືອຂ່າຍຂອງອົງກອນ;
- ມີຄວາມຮູ້ທາງດ້ານ Hardware ທີ່ກ່ຽວຂ້ອງກັບລະບົບເຄືອຂ່າຍ ແລະ ຄວາມປອດໄພ;
- ເປັນຄົນທີ່ມີວິໄນ ໃນການເຮັດວຽກ ໂດຍສະເພາະການຮັກສາຄວາມລັບການເຂົ້າເຖິງຂໍ້ມູນຕ່າງໆ ຂອງອົງກອນ ແລະ ພະນັກງານ;
- ເປັນຄົນທີ່ບໍ່ເຄີຍກໍ່ຄະດີອາຍາ ແລະ ບໍ່ເຄີຍຖືກຕັດອິດສະພາບມາກ່ອນ;
- ຜູ້ສະໝັກຈະຕ້ອງມີຄວາມຮູ້ຄວາມສາມາດໃນການສື່ສານເປັນທັງພາສາລາວ ແລະ ອັງກິດໃນລະດັບດີ.